**ມະຫາວິທຍາລັຍແຄລີຟໍເນັຍ-ແຊນແຟຣນຊິສໂກ**

# ສິດທິຂອງຜູ້ຖືກທົດສອບ

ສິດທິທີ່ກ່າວຂ້າງລຸ່ມນີ້ແມ່ນສິດທິຂອງມະນຸດທຸກໆຄົນທີ່ຖືກຫາບທາມໃຫ້ເປັນຜູ້ຖືກຄົ້ນຄວ້າສຶກສາ. ໃນຖານະທີ່ເປັນຜູ້ຖືກທົດສອບ ຂ້າພະເຈົ້າມີສິດທິດັ່ງຕໍ່ໄປນີ້ຄື:

໑) ຕ້ອງບອກໃຫ້ຂ້າພະເຈົ້າຮູ້ນຳວ່າການຄົ້ນຄວ້າສຶກສານັ້ນມີຈຸດປະສົງຫຍັງແດ່,

໒) ຕ້ອງບອກໃຫ້ຂ້າພະເຈົ້າຮູ້ວ່າຈະມີຫຍັງເກີດຂຶ້ນແດ່ກັບຂ້າພະເຈົ້າແລະຖ້າວ່າວິທີການ, ຢາ ຫລືເຄື່ອງມືທີ່ໃຊ້ນັ້ນແຕກຕ່າງກັນກັບມາດຖານທັມມະດາຫລືບໍ່,

໓) ຕ້ອງບອກໃຫ້ຂ້າພະເຈົ້າຮູ້ວ່າຂ້າພະເຈົ້າສ່ຽງພັຍທັມມະດາແລະ/ຫລືສຳຄັນໆແບບໃດແດ່, ຈະມີຜົນສະທ້ອນຫລືມີຄວາມຮູ້ສຶກມິດມິດກັບສິ່ງທີ່ຈະເກີດຂຶ້ນຍ້ອນການທົດສອບແບບໃດ,

໔) ຕ້ອງບອກໃຫ້ຂ້າພະເຈົ້າຮູ້ວ່າຂ້າພະເຈົ້າຫວັງໄດ້ສິ່ງຕອບແທນ(ຄ່າບຳເນັດ)ຫລືບໍ່, ແລະຖ້າວ່າໄດ້ຈະໄດ້ຫຍັງ,

໕) ຂ້າພະເຈົ້າມີວິທີເລືອກຢ່າງອື່ນແບບໃດແດ່ ແລະການທົດສອບແບບອື່ນໆນັ້ນຈະດີຫລືຈະຮ້າຍກວ່າກັນແບບໃດໃນຂນະທີ່ທຳການທົດສອບຂ້າພະເຈົ້າ,

໖) ຂ້າພະເຈົ້າມີສິດທີ່ຈະຖາມກ່ຽວກັບການສຶກສາຄົ້ນຄວ້ານັ້ນທັງກ່ອນເວລາທຳການທົດສອບແລະໃນຂນະທີ່ຖືກທົດສອບ,

໗) ຕ້ອງບອກໃຫະຂ້າພະເຈົ້າຮູ້ວ່າຂ້າພະເຈົ້າຈະໄດ້ຮັບການຮັກສາພະຍາບານແບບໃດຖ້າວ່າມີຫຍັງເກີດຂຶ້ນ,

໘) ມີສິດທີ່ຈະປະຕິເສດຢ່າງເດັດຂາດຫລືປ່ຽນໃຈໃຫມ່ຫລັງຈາກການສຶກສາຄົ້ນຄວ້າເລີ່ມລົງມືໄປແລ້ວ. ການຕັດສິນໃຈດັ່ງກ່າວຈະບໍ່ກ່ຽວກັບສິດຂອງຂ້າພະເຈົ້າທີ່ວ່າຈະຕ້ອງໄດ້ຮັບການຮັກສາປິ່ນປົວເຖິງແມ່ນວ່າຂ້າພະເຈົ້າບໍ່ໄດ້ຖືກທົດສອບກໍຕາມ,

໙) ມີສິດທີ່ຈະໄດ້ໃບສຳເນົາ(ໃບໂກປີ)ກ່ຽວກັບຂໍ້ຕົກລົງນັ້ນໄວ້ສະບັບຫນຶ່ງ,

໑໐) ຈະຕ້ອງບໍ່ຖືກບັງຄັບໃຫ້ຂ້າພະເຈົ້າຕົກລົງໃກ້ທຳການຄົ້ນຄວ້າຂ້າພະເຈົ້າ.

*ຖ້າຂ້າພະເຈົ້າມີຄຳຖາມເພີ່ມເຕີມຂ້າພະເຈົ້າຈະຕ້ອງໄດ້ຖາມນັກຄົ້ນຄວ້າຫລືຜູ້ລອງເຂົາ. ນອກຈາກນີ້ແລ້ວ ຂ້າພະເຈົ້າສາມາດຕິດຕໍ່ກັບຄນະກັມມະທິການກ່ຽວກັບການຄົ້ນຄວ້າມະນຸດ(Committee on Human Research)ຊຶ່ງທຳຫນ້າທີ່ເປັນຜູ້ປົກປະອງນັກອາສາສມັກໃນເຣື່ອງວິຈັຍຄົ້ນຄວ້າ. ຂ້າພະເຈົ້າຈະຕິດຕໍ່ກັບຄນະກັມມະທິການດັ່ງກ່າວໄດ້ທີ່ໂທຣະສັບ: (໔໑໕) ໔໗໖-໑໘໑໔ ແຕ່ ໘ ໂມງເຊົ້າ ຫາ ໕ ໂມງແລງ, ວັນຈັນຫາວັນສຸກ ຫລືຂຍນຈົດຫມາຍໄປຫາ Committee on Human Research, University of California, San Francisco, CA ໙໔໑໔໓.*

Laodisian-9/89